ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 374/ກຄສງ

ນະຄອນຫລວງວຽງຈັນ, ວັນທີ 05 AUG 2016

# ແຈ້ງການ

ເຖິງ: - ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;

- ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ;
- ຜູ້ອຳນວຍການ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
- ຜູ້ອຳນວຍການ ບໍລິສັດ ເຊົ່າສິນເຊື່ອ;
- ຜູ້ອຳນວຍການ ໂຮງຊວດຈຳ;
- ຜູ້ອຳນວຍການ ບໍລິສັດ ໂອນເງິນດ່ວນລະຫວ່າງປະເທດ.

ເລື່ອງ: ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານ ສະກັດກັ້ນຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT)

- ອີງຕາມ ກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014.
- ອີງຕາມ ດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ເລກທີ 460/ລບ, ລົງວັນທີ 03 ຕຸລາ 2012;
- ອີງຕາມ ດຳລັດ ວ່າດ້ວຍການເຊົ່າສິນເຊື່ອ ສະບັບເລກທີ 11/ນຍ, ລົງວັນທີ 18 ກຸມພາ 1999;
- ອີງຕາມ ດຳລັດ ວ່າດ້ວຍໂຮງຊວດຈຳ ເລກທີ 10/ນຍ, ລົງວັນທີ 02 ກຸມພາ 2002;
- ອີງຕາມ ຂໍ້ກຳນົດ ວ່າດ້ວຍການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເລກທີ 03/ທຫລ, ລົງວັນທີ 20 ມິຖຸນາ 2008.

ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດສະມາຊິກຂອງ ອົງການຕ້ານການຟອກເງິນສາກົນ ແລະ ສະຫະປະຊາຊາດ ຊຶ່ງໄດ້ເຂົ້າຮ່ວມໃນຫຼາຍສົນທິສັນຍາສາກົນ ໂດຍສະເພາະໃນຂົງເຂດວຽກງານຕ້ານການຟອກເງິນ ແລະ ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ສະນັ້ນ, ກົມຄຸ້ມຄອງສະຖາບັນການເງິນ ຈຶ່ງແຈ້ງມາຍັງບັນດາສະຖາບັນການເງິນ ທີ່ໄດ້ຮັບການອະນຸຍາດດຳເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ ໃຫ້ເພີ່ມທະວີໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຢ່າງເຂັ້ມງວດ ດັ່ງລຸ່ມນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014 ໂດຍສະເພາະການຊອກຮູ້ລູກຄ້າ ແລະ ແຫຼ່ງທີ່ມາຂອງທຶນໃຫ້ລະອຽດຊັດເຈນ;
2. ໃຫ້ສະຖາບັນການເງິນ ໃຫ້ຄວາມຮ່ວມມື ໃນເວລາທີ່ ສໍານັກງານຕ້ານການຟອກເງິນ ທະນາຄານແຫ່ງ ສປປ ລາວ ລົງໄປເຮັດວຽກຢູ່ສະຖາບັນການເງິນຂອງທ່ານ;
3. ຫ້າມສະຖາບັນການເງິນ ໃຫ້ບໍລິການ ຫຼື ດໍາເນີນທຸລະກໍາກັບບຸກຄົນ, ນິຕິບຸກຄົນ ທີ່ຢູ່ໃນບັນຊີດໍາຂອງອົງການສະຫະປະຊາຊາດ ຊຶ່ງມີຊື່ເປັນພາສາອັງກິດແມ່ນ Specially Designated Nationals and Blocked Persons List ຫຼື SDN List, ຕາມເວບໄຊ ລຸ່ມນີ້:
    - http:// www.un.org/sc/committees/1267/aq_sanctions_list.shtml
    - http:// www.treasury.gov/resource-center/sanctions/SDN-List/Pages/default.aspx
4. ຊອກຮູ້ລະບຽບ ແລະ ກົດໝາຍຂອງສາກົນ ເພື່ອຮັບປະກັນໃຫ້ການດໍາເນີນທຸລະກໍາກັບຕ່າງປະເທດ ແລະ ຈັດຕັ້ງປະຕິບັດໄດ້ຢ່າງສອດຄ່ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ

ທະນາຄານ ແຫ່ງ ສປປ ລາວ / ກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາຄົມ ປຣະເສີດ